Laotian

# ການຄຸມກຳເນີດສຸກເສີນ



## ຍັງບໍ່ສາຍເກີນໄປ ທີ່ທ່ານຈະປ້ອງກັນ ການຕັ້ງທ້ອງ

## ECP ມີໄວ້ເພື່ອການຄຸມກຳເນີດແບບ ສຸກເສີນເທົ່ານັ້ນ

ຈະໃຊ້ ECP ເປັນຢາຄຸມກຳເນີດທຳມະດາບໍ່ໄດ້ ເພາະວ່າ:
ຢານີ້ບໍ່ມີປະສິດທິພາບໃນການ ປ້ອງກັນການຖືພາໄດ້ເຊັ່ນດຽວ ກັບວິທີຄຸມກຳເນີດທຳມະດາ.

ຖ້າທ່ານຮ່ວມເພດ, ໃຫ້ໃຊ້ວິທີການຄຸມກຳເນີດແບບທຳມະດາ (ເຊັ່ນ ຢາເມັດຄຸມກຳເນີດ, ຖົງອະນາໄມ, ສີດຢາຄຸມກຳເນີດ ແລະວິທີອື່ນໆ)

ຢານີ້ບໍ່ສາມາດປ້ອງກັນອາການອັກເສບທີ່ຕິດຕໍ່ທາງເພດ ແລະໂຣກ AIDS. ຖົງອະນາໄມສາມາດປ້ອງກັນອາການອັກເສບທີ່ຕິດຕໍ່ທາງເພດແລະໂຣກ AIDS ໄດ້ດີທີ່ສຸດ)

**path**

*PATH ແມ່ນອົງການນາໆຊາດທີ່ບໍ່ຫວັງຜົນກຳໄລທີ່ມີສຳນັກງານໃຫຍ່ຢູ່ເມືອງຊີແອດເຕິລລັດວໍຊິງຕັນ. ໜ້າທີ່ຂອງ PATH ແມ່ນເພື່ອປັບປຸງສຸຂະພາບ, ໂດຍສະເພາະ ສຸຂະພາບຂອງຜູ້ຍິງແລະເດັກນ້ອຍ. ສະໜັບສະໜູນໂດຍກອງທຶນຂອງ John Merck Fund; ມູນນິທິ Horizons Foundation; ແລະອົງການສາຫາລະນະສຸກສະຫະຣັດ, ເຂດ 10 ແລະມູນນິທິຂອງ Henry J. Kaiser Family Foundation.*

## ຂ້າພະເຈົ້າຈະສາມາດຮັບຢາ ECP ໄດ້ຢ່າງໃດ?

ທ່ານສາມາດຂໍຮັບຢາ ECP ໄດ້ຈາກທ່ານໝໍຫຼືຄລີນິກຂອງທ່ານ, ທີ່ຄລີນິກປະຈຳຄຸ້ມ ຫຼືຄລີນິກທີ່ໃຫ້ບໍລິການດ້ານສຸຂະພາບ.

ໂທຫາທ່ານໝໍຫຼືຄລີນິກແລະບອກວ່າທ່ານຕ້ອງການ**ຢາເມັດຄຸມກຳເນີດສຸກເສີນ ECP (Emergency Contraceptive Pills)**

ຖ້າທ່ານບໍ່ຮູ້ວ່າຈະໄປບ່ອນໃດ, ໃຫ້ໂທຫາ:

**ເລກໂທດ່ວນ ພແນກຄຸມກຳເນີດສຸກເສີນ**
**1-888-668-2528**



ສຳລັບພາສາອັງກິດແລະສະເປນເທົ່ານັ້ນ.

ໝາຍເລກໂທດ່ວນນີ້ໃຫ້*ບໍລິການຟຣີ, ຮັກສາຄວາມລັບໃຫ້ທ່ານ* ແລະເປີດໄວ້ສລອດ *24 ຊົ່ວໂມງ*ຕໍ່ວັນ. ມັນຈະບອກບ່ອນທີ່ທ່ານສາມາດໄປຫາໄດ້ເພື່ອຂໍຄວາມຊ່ວຍເຫຼືອ.

ທ່ານສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່:
***World Wide Web***
**http://opr.princeton.edu/ec/**



## ທ່ານຢ້ານກົວວ່າທ່ານຈະຕັ້ງທ້ອງບໍ່?

ຈົ່ງໃຊ້**ການຄຸມກຳເນີດສຸກເສີນ**ຖ້າຫາກທ່ານຮ່ວມເພດພາຍໃນ 3 ວັນທີ່ຜ່ານມາ ແລະ:

- ທ່ານບໍ່ໄດ້ໃຊ້ວິທີໃດຄຸມກຳເນີດ
- ຖົງອະນາໄມສີກຂາດຂະນະຮ່ວມເພດ
- ທ່ານລ່າຊ້າໃນການສີດຢາຄຸມກຳເນີດ
- ທ່ານບໍ່ໄດ້ກິນຢາເມັດຄຸມກຳເນີດຕິດຕໍ່ກັນເປັນເວລາສອງວັນຫຼືຫຼາຍກວ່ານັ້ນ ຫຼືວ່າທ່ານເລີ້ມກິນຢາລ່າຊ້າ
- ທ່ານຖືກບັງຄັບໃຫ້ຮ່ວມເພດ

**ການຄຸມກຳເນີດສຸກເສີນເປັນວິທີນຶ່ງທີ່ປ້ອງກັນບໍ່ໃຫ້ຕັ້ງທ້ອງຫຼັງຈາກການຮ່ວມເພດ.** ມີສອງວິທີໃນການຄຸມກຳເນີດແບບສຸກເສີນ:

1. **ຢາເມັດຄຸມກຳເນີດສຸກເສີນ** (ຫຼືເອີ້ນອີກຢ່າງນຶ່ງວ່າ **ECPs** *ຫຼືຢາທີ່ກິນໃນຕອນເຊົ້າຫຼັງວັນທີ່ຮ່ວມເພດ* ***(Morning After Pills)***) ທີ່ໃຊ້*ພາຍໃນ 3 ວັນຫຼັງຈາກທີ່ຮ່ວມເພດ*, ຫຼື
2. **IUD** (intrauterine device) ໃຊ້ສອດເຂົ້າໃນມົດລູກ *<u>5</u> ວັນຫຼັງຈາກທີ່ຮ່ວມເພດ.*

ຖາມທ່ານໝໍຂອງທ່ານສຳລັບລາຍລະອຽດ.

## ຢາເມັດຄຸມກຳເນີດສຸກເສີນແມ່ນຫຍັງ (ECPs)?

**ECPs** ແມ່ນຢາຄຸມກຳເນີດທຳມະດາຊະນິດນຶ່ງ. ຢານີ້ເປັນຢາທີ່ທ່ານຕ້ອງກິນ*ຕາມກຳນົດພິເສດ ພາຍໃນ 3 ວັນ*ຫຼັງຈາກ*ທີ່ທ່ານຮ່ວມເພດ* ເພື່ອປ້ອງກັນການຕັ້ງທ້ອງ. *ຢານີ້ສາມາດຫລຸດຜ່ອນໂອກາດໃນການຕັ້ງທ້ອງໄດ້ປະມານ* 75%.




## *ຢ່າລໍຊ້າ!*

***ເພື່ອທີ່ຈະປ້ອງກັນການຖືພາ, ທ່ານຈະຕ້ອງກິນຢາເມັດຄຸມກຳເນີດສຸກເສີນພາຍໃນ 3 ວັນ (ຫຼື 72 ຊົ່ວໂມງ) ຫຼັງຈາກຮ່ວມເພດ.***

### ECPs *ທຳໜ້າທີ່ຫຍັງແດ່?*

**ECPs** ປ້ອງກັນການຕັ້ງທ້ອງໄດ້ໂດຍ:

- ປ້ອງກັນບໍ່ໃຫ້ຕົກໄຂ່ຢ່າງຊົ່ວຄາວ, ຫຼື
- ປ້ອງກັນບໍ່ໃຫ້ໄຂ່ປະສົມພັນ, ຫຼື
- ປ້ອງກັນໄຂ່ທີ່ໄດ້ຮັບການປະສົມພັນແລ້ວບໍ່ໃຫ້ເຂົ້າໄປເກາະຢູ່ໃນມົດລູກ

**ECPs** ຈະບໍ່ສາມາດທຳໜ້າທີ່ໄດ້ຖ້າທ່ານໄດ້ຕັ້ງທ້ອງແລ້ວ.
**ECPs** *ບໍ່ແມ່ນ*ຢາທີ່ໃຊ້ທຳແທ້ງ.

*ສຳລັບລາຍລະອຽດ, ໃຫ້ໂທຣຫາສາຍໂທຣດ່ວນການຄຸມກຳເນີດສຸກເສີນ.* ຟຣີ, ເກັບເປັນຄວາມລັບຕລອດທັງ 24 ຊົ່ວໂມງຕໍ່ມື້

**1-888-668-2528**

## *ຢານີ້ປອດໄພຫຼືບໍ່?*

ກົມອາຫານແລະຢາຂອງສະຫະຣັດອະເມຣິກາໄດ້ແຈ້ງວ່າ ECP ເປັນຢາທີ່ປອດໄພ. ຢານີ້ສາມາດຫຼຸດຜ່ອນໂອກາດໃນການຕັ້ງທ້ອງໄດ້ສູງຫຼັງຈາກການຮ່ວມເພດທີ່ບໍ່ໄດ້ມີການປ້ອງກັນ.
ຂໍໃຫ້ທ່ານປຶກສາກັບທ່ານໝໍຂອງທ່ານເພື່ອເບິ່ງວ່າມີເຫດຜົນອັນໃດຫຼືບໍ່ທີ່ທ່ານຈະບໍ່ຄວນໃຊ້ **ECPs** ໄດ້.

## ຢານີ້ທຳໃຫ້ມີອາການແພ້ຫຼືບໍ່?

ຜູ້ຍິງບາງຄົນທີ່ກິນຢາ **ECPs** ມີອາການປຸ້ນທ້ອງຫຼືຮາກ. ຜູ້ຍິງ ບາງຄົນມີອາການເຈັບນົມຫຼືປວດຫົວ. ອາການແພ້ນີ້ຈະມີຢູ່ປະມານນຶ່ງວັນ. **ECPs** ອາດຈະເຮັດໃຫ້ປະຈຳເດືອນມາໄວຫຼືຊ້າກວ່າປົກກະຕິໄດ້.

